# ກິດຈະກຳການຮຽນຮູ້ການເປັນນັກສະແດງ




| ID: | Author: | Organization: | Created date: |
|---|---|---|---|
| 86 | RDA | RDA | 2020-05-04 00:00:00 |

## 1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

ທັກສະການສະແດງອອກເປັນທັກສະໜຶ່ງທີ່ໄວໜຸ່ມຫຼາຍຄົນຍັງຂາດ ໂດຍສະເພາະແມ່ນທັກສະການສະແດງ ເພື່ອໃຫ້ພວກເຮົາມີຄວາມກ້າທີ່ຈະສະແດງລະຄອນອັນໃດອັນໜຶ່ງທີ່ເຮົາຈະສວມບົດບາດຂອງມັນ

## 2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

ຕໍ່ກັບການຂາດທັກສະດັ່ງກ່າວ ທາງໂຄງການຈັດຈັດເຝິກອົບຮົມການສະແດງລະຄອນໃຫ້ກັບໄວໜຸ່ມ ໂດຍເນັ້ນໃສ່ຜູ້ທີ່ສົນໃຈ ແລະມັກໃນການຜະລິດສື່ຕ່າໆໃນການພັດທະນາ ເຊິ່ງກວມລວມເຖິງ ບົດບາດຍິງຊາຍ ເພດ ການສຶກສາ

## 3. ຜົນສຳເລັດຂອງໂຄງການ / Results of the project

ໄດ້ປົດປ່ອຍອາລົມຂອງຕົວເອງໄປຕາມທ່າທາງການຢ່າງທີ່ແປກປະຫຼາດທີ່ສຸດບໍ່ວ່າຈະມີອາລົມທີ່ເສົ້າ,ເສຍໃຈ,ຍິ້ມ,ມີຄວາມສຸກຫຍັງຕ່າງໆເພື່ອໃຫ້ເຮົາເຂົ້າກັບຕົວລະຄອນທີ່ເຮົາຈະສະແດງອອກມາໃຫ້ມັກຄືກັບບົດຕົວລະຄອນຂອງເຂົາໃຫ້ມັນດີທີ່ສຸດ

ພວກເຮົາແຕ່ລະກຸ່ມໄດ້ຕັ້ງໃຈຊ້ອມບົດລະຄອນຫລາຍເຖິງວ່າມັນສິບໍ່ອອກມາໄດ້ດີປານໃດແຕ່ກະດີໃຈທີ່ຕົວເອງເຮັດໄດ້ຕາມຄວາມສາມາດຂອງໂຕເອງ

## 4. ປັດໄຈສູ່ຜົນສຳເລັດ / Factors of success

ພວກເຮົາແຕ່ລະຄົນຕັ້ງໃຈ,ພະຍາຍາມ ແລະໄດ້ມີຄວາມສາມັກຄີກັນຊ້ອມເພື່ອຢາກໃຫ້ການສະແດງຂອງພວກເຮົານັ້ນອອກມາດີທີ່ສຸດ

## 5. ຂໍ້ຈຳກັດທີ່ເຮັດໃຫ້ບໍ່ສຳເລັດຜົນໄດ້ດີ / Limitations

ເພາະວ່າພວກເຮົາຍັງບໍ່ມີຄວາມກ້າສະແດງອອກ,ບໍ່ໝັ້ນໃຈຕົວເອງແລະຄວາມທີ່ວ່າບໍ່ກ້າ,ບາງຄົນກະຫົວອອກມາ,ເກັບອາລົມບໍ່ໄດ້,ກະກຽມອຸປະກອນການສະແດງບໍ່ຕົງເວລາທີ່ກຳນົດໄວ້ ,ຈຶ່ງເຮັດໃຫ້ເຮົາບໍ່ໄປຕາມເປົ້າໝາຍການສະແດງທີ່ເຮົາຕັ້ງໄວ້

## 6. ຂໍ້ແນະນຳສຳລັບຜູ້ທີ່ສົນໃຈຢາກທົດລອງນຳໃຊ້ / Recommendations for scaling up

ຢາກໃຫ້ທຸກຄົນມີຄວາມກ້າສະແດງອອກ ຖ້າມີບົດລະຄອນທີ່ເຮົາຈະໄດ້ສວມບົດບາດ ເຮົາຄວນມີສະຕິຕັ້ງໃຈເພື່ອທີ່ຈະໃຫ້ໄດ້ຮັບຜົນອອກມາດີທີ່ສຸດຕາມຕົວລະຄອນທີ່ໄດ້ກຳນົດໄວ້







